ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 473 /ລບ
ນະຄອນຫຼວງວຽງຈັນ, ວັນທີ 12.07.2021

# ດຳລັດ
# ວ່າດ້ວຍຜູ້ອາຍຸສູງ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ໜັງສືສະເໜີ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 0969/ຮສສ, ລົງວັນທີ 26 ມີນາ 2021.

## ລັດຖະບານ ອອກດຳລັດ:

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານຜູ້ອາຍຸສູງ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ດຳເນີນຢ່າງມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ອາຍຸສູງ, ໃຫ້ຜູ້ອາຍຸສູງໄດ້ຮັບການເບິ່ງແຍງ, ມີຊີວິດການເປັນຢູ່ທີ່ດີ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ຜູ້ອາຍຸສູງ**

ຜູ້ອາຍຸສູງ ແມ່ນ ພົນລະເມືອງລາວ ທີ່ມີອາຍຸແຕ່ ຫົກສິບປີ ຂຶ້ນໄປ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຄອບຄົວ** ໝາຍເຖິງ ຈຸລັງໜຶ່ງ ຂອງສັງຄົມ ຊຶ່ງມີ ຜົວ, ເມຍ, ລູກ ຫຼື ສະມາຊິກອື່ນ ໃນຄອບຄົວ ທີ່ມີສາຍພົວພັນ ຊຶ່ງກັນ ແລະ ກັນ ແລະ ດຳລົງຊີວິດຮ່ວມກັນ ໂດຍມີສຳມະໂນຄົວຢັ້ງຢືນ ຢ່າງຖືກຕ້ອງ;
2. **ສັງຄົມ** ໝາຍເຖິງ ການພົວພັນລະຫວ່າງ ຄົນກັບ ຄົນ, ກຸ່ມຄົນ, ຊຸມຊົນ ຫຼື ການຈັດຕັ້ງໃນສັງຄົມ;
3. **ສັງຄົມອາຍຸສູງ** ໝາຍເຖິງ ສັງຄົມ ທີ່ມີປະຊາກອນອາຍຸແຕ່ ຫົກສິບປີ ຂຶ້ນໄປ ກວມ ສິບ ສ່ວນຮ້ອຍຂຶ້ນໄປ ຂອງປະຊາກອນທັງໝົດ;
4. **ການຮັກສາສຸຂະພາບ** ໝາຍເຖິງ ຂະບວນການເຄື່ອນໄຫວ ເພື່ອຮັກສາສຸຂະພາບ ຂອງຜູ້ອາຍຸສູງ ໃນການເສີມສ້າງໃຫ້ຜູ້ອາຍຸສູງ ມີສຸຂະພາບທາງດ້ານ ຮ່າງກາຍ ແລະ ຈິດໃຈ ທີ່ສົມບູນຕາມໄວອາຍຸຂອງຜູ້ອາຍຸສູງ;

5. **ສະຖານທີ່ສາທາລະນະ** ໝາຍເຖິງ ສະຖານທີ່ ທີ່ທຸກຄົນສາມາດເຂົ້າເຖິງ ແລະ ນຳໃຊ້ ເປັນຕົ້ນ ໂຮງໝໍ, ໂຮງຮຽນ, ວັດ, ສວນສາທາລະນະ, ແຫຼ່ງທ່ອງທ່ຽວ, ສະໜາມກິລາ, ສະໜາມບິນ, ສະຖານີລົດໂດຍສານ, ສະຖານີລົດໄຟ, ຕະຫຼາດ, ສະຖານທີ່ຈອດລົດ, ປໍ້ານໍ້າມັນ, ທະນາຄານ;

6. **ການເຂົ້າເຖິງ** ໝາຍເຖິງ ການໄດ້ຮັບການບໍລິການ ໂດຍປາສະຈາກການຂັດຂວາງ, ສິ່ງກີດຂວາງດ້ານສະພາບແວດລ້ອມ ແລະ ທັດສະນະຄະຕິ.

### ມາດຕາ 4 ນະໂຍບາຍ ຂອງລັດ ກ່ຽວກັບວຽກງານຜູ້ອາຍຸສູງ

ລັດ ສົ່ງເສີມວຽກງານຜູ້ອາຍຸສູງ ດ້ວຍການຈັດສັນງົບປະມານ, ສ້າງໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກຂັ້ນພື້ນຖານ ຕາມຄວາມເໝາະສົມ ເຂົ້າໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

ລັດ ຊຸກຍູ້ ແລະ ສົ່ງເສີມ ການພັດທະນາວຽກງານຜູ້ອາຍຸສູງ ໃຫ້ດຳເນີນໄປຄຽງຄູ່ກັບການຈະເລີນເຕີບໂຕທາງດ້ານເສດຖະກິດ ແລະ ການປ່ຽນແປງຂອງປະຊາກອນ.

ລັດ ຊຸກຍູ້ ແລະ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນດ້ານທຶນຮອນ, ວັດຖຸປະກອນ, ເຕັກນິກວິຊາການ, ສິ່ງອຳນວຍຄວາມສະດວກ ເຂົ້າໃນການພັດທະນາວຽກງານຜູ້ອາຍຸສູງ.

### ມາດຕາ 5 ຫຼັກການກ່ຽວກັບວຽກງານຜູ້ອາຍຸສູງ

ວຽກງານຜູ້ອາຍຸສູງ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
2. ຄຸ້ມຄອງ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ເຄົາລົບສິດ, ຮູ້ບຸນຄຸນ ຜູ້ອາຍຸສູງ ແລະ ຍອມຮັບສັງຄົມອາຍຸສູງ;
4. ເຊື່ອມສານທັດສະນະບົດບາດ ຍິງ-ຊາຍ ເຂົ້າໃນວຽກງານຜູ້ອາຍຸສູງ ໂດຍຄຳນຶງເຖິງຄວາມຕ້ອງການ ແລະ ປະສົບການ ທີ່ແຕກຕ່າງຂອງເພດຍິງ ແລະ ເພດຊາຍ;
5. ບໍ່ ຈຳແນກ, ປ່ອຍປະລະເລີຍ, ໃຊ້ຄວາມຮຸນແຮງ, ລ່ວງລະເມີດທາງຮ່າງກາຍ, ຈິດໃຈ ແລະ ກຽດ ສັກສີ ລວມທັງບໍ່ສະແຫວງຫາຜົນປະໂຫຍດຈາກຜູ້ອາຍຸສູງ;
6. ມີສ່ວນຮ່ວມ ຂອງທຸກພາກສ່ວນໃນສັງຄົມ ເຂົ້າໃນການປົກປ້ອງ, ຊ່ວຍເຫຼືອ ແລະ ເບິ່ງແຍງ ຜູ້ອາຍຸສູງ.

### ມາດຕາ 6 ຂອບເຂດການນຳໃຊ້ດຳລັດ

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບວຽກງານຜູ້ອາຍຸສູງ ຢູ່ ສປປ ລາວ.

### ມາດຕາ 7 ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຜູ້ອາຍຸສູງ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ວິທະຍາສາດ, ເຕັກໂນໂລຊີ, ການພັດທະນາຊັບພະຍາກອນມະນຸດ ເພື່ອພັດທະນາວຽກງານຜູ້ອາຍຸສູງ, ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ສິດ ແລະ ພັນທະ ຂອງຜູ້ອາຍຸສູງ

**ມາດຕາ 8 ສິດ ຂອງຜູ້ອາຍຸສູງ**

ຜູ້ອາຍຸສູງ ມີ ສິດ ດັ່ງນີ້:

1. ຮັບປະກັນການດຳລົງຊີວິດຂັ້ນພື້ນຖານ ເປັນຕົ້ນ ການ ກິນ, ຢູ່, ນຸ່ງຫົ່ມ, ໄປມາ ແລະ ຮັກສາສຸຂະພາບ;
2. ເລືອກໃນການດຳລົງຊີວິດຮ່ວມກັບ ລູກ, ຫຼານ, ຍາດພີ່ນ້ອງ ຫຼື ດ້ວຍຕົນເອງ;
3. ໄດ້ຮັບບູລິມະສິດໃນການດູແລ, ປິ່ນປົວ ແລະ ຟື້ນຟູສຸຂະພາບ;
4. ໄດ້ຮັບບູລິມະສິດ ໃນການໃຊ້ບໍລິການສາທາລະນະ ທັງໄດ້ຮັບການຫຼຸດຜ່ອນຄ່າບໍລິການ ຕາມຄວາມເໝາະສົມ;
5. ໄດ້ຮັບການຍົກເວັ້ນການປະກອບສ່ວນເຂົ້າໃນກິດຈະກຳທາງສັງຄົມ ເວັ້ນແຕ່ການປະກອບສ່ວນດ້ວຍຄວາມສະໝັກໃຈ;
6. ເຂົ້າຮ່ວມກິດຈະກຳທາງສັງຄົມ ແລະ ໄດ້ຮັບເງື່ອນໄຂໃນການເຮັດວຽກ ທີ່ເໝາະສົມ;
7. ເຂົ້າເປັນສະມາຊິກໃນສະມາຄົມຜູ້ອາຍຸສູງ;
8. ມີສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 9 ພັນທະຂອງຜູ້ອາຍຸສູງ**

ຜູ້ອາຍຸສູງ ມີ ພັນທະ ດັ່ງນີ້:

1. ເປັນແບບຢ່າງ ໃນການດຳລົງຊີວິດທີ່ດີ ໃຫ້ແກ່ຄອບຄົວ ແລະ ສັງຄົມ;
2. ສຶກສາອົບຮົມຄົນຮຸ່ນຫຼັງ, ຮັກສາມູນເຊື້ອວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ;
3. ຖ່າຍທອດບົດຮຽນ ແລະ ປະສົບການທີ່ດີໃຫ້ແກ່ຄົນຮຸ່ນຫຼັງ;
4. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ III
## ການເບິ່ງແຍງ ແລະ ພັດທະນາ ຜູ້ອາຍຸສູງ

### ໝວດທີ 1
### ການເບິ່ງແຍງ ຜູ້ອາຍຸສູງ

**ມາດຕາ 10 ການເບິ່ງແຍງຜູ້ອາຍຸສູງ**

ການເບິ່ງແຍງຜູ້ອາຍຸສູງ ແມ່ນ ຂະບວນການເຄື່ອນໄຫວ ຊ່ວຍເຫຼືອໃຫ້ຜູ້ອາຍຸສູງ ໄດ້ເຂົ້າເຖິງ ການບໍລິການ ດ້ານສາທາລະນະສຸກ, ກິດຈະກຳທາງສັງຄົມ ແລະ ສະຖານທີ່ສາທາລະນະ ຊຶ່ງເປັນຄວາມຮັບຜິດຊອບຂອງ ຄອບຄົວ, ສັງຄົມ ແລະ ລັດ.

**ມາດຕາ 11 ຄວາມຮັບຜິດຊອບໃນການເບິ່ງແຍງ ຂອງຄອບຄົວ**

ຄອບຄົວ ມີຄວາມຮັບຜິດຊອບໃນການເບິ່ງແຍງ ຜູ້ອາຍຸສູງ ດັ່ງນີ້:

1. ເຄົາລົບ, ເປັນຫ່ວງເປັນໄຍ, ຊ່ວຍເຫຼືອ, ເບິ່ງແຍງ ແລະ ລ້ຽງດູຜູ້ອາຍຸສູງ ໃຫ້ມີຄວາມປອດໄພ ໃນຊີວິດປະຈຳວັນ ທາງດ້ານ ຮ່າງກາຍ, ຈິດໃຈ ແລະ ຊັບສິນ;

2. ຮັບປະກັນ ໃຫ້ຜູ້ອາຍຸສູງ ໄດ້ຮັບການເບິ່ງແຍງ, ປິ່ນປົວສຸຂະພາບຂັ້ນຕົ້ນ;
3. ອຳນວຍຄວາມສະດວກໃຫ້ຜູ້ອາຍຸສູງ ໄດ້ຮັບການຮຽນຮູ້ຕະຫຼອດຊີວິດ;
4. ອຳນວຍຄວາມສະດວກໃຫ້ຜູ້ອາຍຸສູງ ມີວຽກເຮັດງານທຳ ແລະ ມີລາຍຮັບ;
5. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 12 ຄວາມຮັບຜິດຊອບໃນການເບິ່ງແຍງ ຂອງສັງຄົມ**

ສັງຄົມ ມີຄວາມຮັບຜິດຊອບໃນການສະໜັບສະໜູນ, ຮ່ວມມື, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ຜູ້ອາຍຸສູງ ສາມາດເຄື່ອນໄຫວ ແລະ ເຂົ້າຮ່ວມກິດຈະກຳຕ່າງໆ ໃນສັງຄົມ ເປັນຕົ້ນ ການເຕົ້າໂຮມຄວາມສາມັກຄີ, ການສະແດງຄວາມກະຕັນຍູຮູ້ບຸນຄຸນ, ການປົກປ້ອງ ສິດ ແລະ ຜົນປະໂຫຍດ ອັນຊອບທຳຂອງຜູ້ອາຍຸສູງ.

**ມາດຕາ 13 ຄວາມຮັບຜິດຊອບໃນການເບິ່ງແຍງ ຂອງລັດ**

ລັດ ມີຄວາມຮັບຜິດຊອບໃນການເບິ່ງແຍງຜູ້ອາຍຸສູງ ດ້ວຍການ ສ້າງກົນໄກ, ໂຄສະນາໃຫ້ຄວາມຮູ້, ສ້າງໂຄງລ່າງພື້ນຖານ, ເຕັກໂນໂລຊີ, ສ້າງສິ່ງອຳນວຍຄວາມສະດວກຂັ້ນພື້ນຖານ ແລະ ການບໍລິການ ກ່ຽວກັບການເບິ່ງແຍງຜູ້ອາຍຸສູງ.

## ໝວດທີ 2
## ການສົ່ງເສີມ, ປິ່ນປົວ ແລະ ຟື້ນຟູ ສຸຂະພາບ ຜູ້ອາຍຸສູງ

**ມາດຕາ 14 ການສົ່ງເສີມສຸຂະພາບ**

ການສົ່ງເສີມສຸຂະພາບ ແມ່ນ ການໃຫ້ຂໍ້ມູນ ຂ່າວສານ ແລະ ຄຳແນະນຳ ກ່ຽວກັບການສົ່ງເສີມ ແລະ ຮັກສາສຸຂະພາບ, ສ້າງສະພາບທີ່ເອື້ອອຳນວຍໃນການດຳລົງຊີວິດ ສຳລັບຜູ້ອາຍຸສູງ ເພື່ອໃຫ້ມີສຸຂະພາບດີ.

ບຸກຄົນ, ຄອບຄົວ, ຊຸມຊົນ, ສັງຄົມ ແລະ ການຈັດຕັ້ງ ຕ້ອງເອົາໃຈໃສ່ໃນການເບິ່ງແຍງດູແລສຸຂະພາບດ້ວຍການໃຫ້ພັກຜ່ອນ, ອອກກຳລັງກາຍ, ໄດ້ຮັບການກວດສຸຂະພາບ, ໄດ້ຮັບໂພສະນາການ ທີ່ເໝາະສົມ, ປິ່ນປົວ ແລະ ສາມາດຮ່ວມກິດຈະກຳໃນສັງຄົມ ຢ່າງເປັນປົກກະຕິ.

**ມາດຕາ 15 ການປິ່ນປົວ ຜູ້ອາຍຸສູງ**

ຜູ້ອາຍຸສູງ ຕ້ອງໄດ້ຮັບບູລິມະສິດໃນການ ກວດ, ຊອກຄົ້ນຫາພະຍາດ, ບົ່ງມະຕິພະຍາດ, ວາງຢາ, ປະຕິບັດເຕັກນິກການແພດ, ເຮັດໃຫ້ຜູ້ອາຍຸສູງໄດ້ຮັບການພັກຜ່ອນ ຟື້ນຟູສຸຂະພາບ, ຫາຍຈາກພະຍາດ ແລະ ມີສຸຂະພາບດີ, ແຂງແຮງ ລວມທັງການສົ່ງເສີມສຸຂະພາບ.

ຂະແໜງການສາທາລະນະສຸກ ສົມທົບກັບ ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ ແລະ ພາກສ່ວນທີ່ກ່ຽວຂ້ອງ ສ້າງກົນໄກການປະສານງານ ແລະ ລະບົບການສົ່ງຕໍ່ ຜູ້ອາຍຸສູງ ລະຫວ່າງ ການປິ່ນປົວໃນຊຸມຊົນ ການປິ່ນປົວຂັ້ນພື້ນຖານ ແລະ ການດູແລປິ່ນປົວໄລຍະຍາວ ເພື່ອໃຫ້ຜູ້ອາຍຸສູງໄດ້ຮັບການປິ່ນປົວ ຢ່າງຕໍ່ເນື່ອງ.

ຜູ້ອາຍຸສູງ ທີ່ຕິດເຊື້ອພະຍາດທີ່ຮ້າຍແຮງ ຈະໄດ້ຮັບການຊ່ວຍເຫຼືອ ແລະ ປິ່ນປົວ ຢ່າງເໝາະສົມ.

ຜູ້ອາຍຸສູງ ທີ່ທຸກຍາກ, ອະນາຖາ ແລະ ຜູ້ອາຍຸສູງ ທີ່ໂດດດ່ຽວ, ປ່ຽວພອຍ, ບໍ່ມີຜູ້ດູແລ ຈະໄດ້ຮັບການຍົກເວັ້ນ ຫຼື ຫຼຸດຜ່ອນ ຄ່າບໍລິການປິ່ນປົວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

ມາດຕາ 16 ການຟື້ນຟູສຸຂະພາບ

ຜູ້ອາຍຸສູງ ຕ້ອງໄດ້ຮັບການ ໃຫ້ຄໍາປຶກສາ, ຟື້ນຟູ, ບໍາບັດ ທາງດ້ານ ຮ່າງກາຍ ແລະ ຈິດໃຈ ພ້ອມທັງໄດ້ຮັບການສະໜອງ ອຸປະກອນ, ເຄື່ອງຄໍ້າຊູ ແລະ ເຄື່ອງຊ່ວຍຊູ ຕາມຫຼັກການການແພດ.

ການຟື້ນຟູສຸຂະພາບ ຕ້ອງມີການປະສານສົມທົບກັນ ລະຫວ່າງ ການຟື້ນຟູຢູ່ ໂຮງໝໍ, ສູນການແພດຟື້ນຟູໜ້າທີ່ການ, ການຟື້ນຟູ ຢູ່ ຊຸມຊົນ ແລະ ຄອບຄົວ.

ສໍາລັບຜູ້ອາຍຸສູງ ທີ່ທຸກຍາກ, ອະນາຖາ, ໂດດດ່ຽວ, ປ່ຽວພອຍ ແລະ ທີ່ບໍ່ມີຜູ້ດູແລ ຈະໄດ້ຮັບການຍົກເວັ້ນ ຫຼື ຫຼຸດຜ່ອນ ຄ່າບໍລິການ ຟື້ນຟູ, ບໍາບັດ, ອຸປະກອນ, ເຄື່ອງຄໍ້າຊູ ແລະ ເຄື່ອງຊ່ວຍຊູ.

## ໝວດທີ 3
## ການສະຫວັດດີການ ສໍາລັບຜູ້ອາຍຸສູງ

**ມາດຕາ 17 ການປະກັນສຸຂະພາບ**

ຂະແໜງການທີ່ກ່ຽວຂ້ອງ ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ຜູ້ອາຍຸສູງ ໄດ້ເຂົ້າລະບົບປະກັນສຸຂະພາບ ຕາມກົດໝາຍວ່າດ້ວຍ ການປະກັນສຸຂະພາບ ເພື່ອຮັບປະກັນໃຫ້ຜູ້ອາຍຸສູງ ໄດ້ຮັບການບໍລິການປິ່ນປົວ.

**ມາດຕາ 18 ສັງຄົມສົງເຄາະ**

ຂະແໜງການທີ່ກ່ຽວຂ້ອງ, ຊຸມຊົນ, ສັງຄົມ ມີຄວາມຮັບຜິດຊອບໃນການຊ່ວຍເຫຼືອຜູ້ອາຍຸສູງ ທີ່ທຸກຍາກ ເປັນຕົ້ນ ການອຸດໜູນລ້ຽງດູ, ການສະໜອງອາຫານ, ເຄື່ອງນຸ່ງຫົ່ມ, ທີ່ຢູ່ອາໄສ, ຢາປົວພະຍາດ, ການສ້າງສິ່ງອໍານວຍຄວາມສະດວກ ທີ່ເໝາະສົມ ແລະ ປອດໄພ.

ໃນກໍລະນີ ມີເຫດສຸກເສີນ ຫຼື ເສຍຊີວິດ ບຸກຄົນ, ຄອບຄົວ, ການຈັດຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງ ກໍຕ້ອງເອົາໃຈໃສ່ ແລະ ໃຫ້ການຊ່ວຍເຫຼືອຜູ້ອາຍຸສູງ ຢ່າງທັນການ.

## ໝວດທີ 4
## ການສຶກສາ ແລະ ກິລາ

**ມາດຕາ 19 ການສົ່ງເສີມການສຶກສາ**

ຂະແໜງການສຶກສາທິການ ແລະ ກິລາ, ຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ຜູ້ອາຍຸສູງ ໄດ້ຮັບການຍົກລະດັບການສຶກສາ, ຝຶກອົບຮົມ ຫຼື ຝຶກວິຊາຊີບ ຢູ່ສະຖານການສຶກສາ, ສູນຊຸມຊົນ ແລະ ເຂົ້າເຖິງຂໍ້ມູນ ຂ່າວສານ ສໍາລັບການສຶກສາ, ທັງສົ່ງເສີມໃຫ້ຜູ້ອາຍຸສູງໄດ້ຖ່າຍທອດຄວາມຮູ້ ແລະ ປະສົບການ ໂດຍຜ່ານການສອນ, ຝຶກອົບຮົມ, ບັນລະຍາຍ, ຜ່ານສື່ສິ່ງພິມ ແລະ ສື່ອີເລັກໂຕຣນິກ ຢ່າງເໝາະສົມ.

**ມາດຕາ 20 ກິລາ-ກາຍຍະກໍາ ສໍາລັບຜູ້ອາຍຸສູງ**

ຜູ້ອາຍຸສູງ ສາມາດເຄື່ອນໄຫວ ກິລາ-ກາຍຍະກໍາ ດ້ວຍການຫຼິ້ນ, ການອອກກໍາລັງກາຍ, ການແຂ່ງຂັນ ກິລາ-ກາຍຍະກໍາພື້ນເມືອງ ທີ່ເປັນມູນເຊື້ອ ຂອງບັນດາເຜົ່າ ແລະ ກິລາສາກົນ.

ຂະແໜງການສຶກສາທິການ ແລະ ກິລາ, ຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຊຸກຍູ້, ສົ່ງເສີມ ການເຄື່ອນໄຫວກິລາ-ກາຍຍະກໍາ ຂອງຜູ້ອາຍຸສູງ ດ້ວຍຮູບການ ແລະ ວິທີການຕ່າງໆ ທີ່ເໝາະສົມ.

## ໝວດທີ 5
## ການສົ່ງເສີມວຽກເຮັດງານທຳ

**ມາດຕາ 21 ການສົ່ງເສີມວຽກເຮັດງານທຳ**

ຄອບຄົວ, ສັງຄົມ ແລະ ລັດ ໃຫ້ໂອກາດ ແລະ ສົ່ງເສີມໃຫ້ຜູ້ອາຍຸສູງ ມີວຽກເຮັດງານທຳ ແລະ ມີອາຊີບທີ່ເໝາະສົມ ເປັນຕົ້ນ ດຳເນີນທຸລະກິດ, ເປັນທີ່ປຶກສາ, ຜູ້ຊ່ຽວຊານ, ອາຈານສອນ, ນັກຄົ້ນຄວ້າ, ປະດິດຄິດແຕ່ງ.

**ມາດຕາ 22 ການຈ້າງງານຜູ້ອາຍຸສູງ**

ອົງການຈັດຕັ້ງຂອງລັດ, ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ສາມາດຈ້າງຜູ້ອາຍຸສູງ ໃຫ້ເຮັດວຽກງານໃດໜຶ່ງ ທີ່ເໝາະສົມກັບ ຄວາມຮູ້ ຄວາມສາມາດ ແລະ ຄວາມຊຳນານງານ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ວັດທະນະທຳ ແລະ ການພັກຜ່ອນ

**ມາດຕາ 23 ການເຂົ້າຮ່ວມ ວັດທະນະທຳ**

ຜູ້ອາຍຸສູງ ສາມາດ ເຂົ້າຮ່ວມ ແລະ ເຄື່ອນໄຫວກິດຈະກຳທາງດ້ານວັດທະນະທຳ ເປັນຕົ້ນ ສິລະປະວັນນະຄະດີ, ງານບຸນປະເພນີ, ການປະດິດຄິດແຕ່ງ ແລະ ການເຂົ້າຮ່ວມງານສະເຫຼີມສະຫຼອງວັນສຳຄັນຂອງຊາດ ແລະ ສາກົນ.

**ມາດຕາ 24 ການພັກຜ່ອນ**

ລັດ, ສັງຄົມ, ຊຸມຊົນ ແລະ ຄອບຄົວ ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ຜູ້ອາຍຸສູງ ໄດ້ພັກຜ່ອນ ຕາມສະຖານທີ່ພັກຜ່ອນຕ່າງໆ ລວມທັງໄດ້ຟັງລາຍການວິທະຍຸ, ໄດ້ເບິ່ງໂທລະພາບ, ໄດ້ເຂົ້າຊົມລະຄອນ, ຮູບເງົາ.

## ໝວດທີ 7
## ການເຂົ້າເຖິງ ອາຄານ, ສະຖານທີ່ ແລະ ການຂົນສົ່ງ ສາທາລະນະ

**ມາດຕາ 25 ການເຂົ້າເຖິງ ອາຄານ, ສະຖານທີ່ສາທາລະນະ**

ຜູ້ອາຍຸສູງ ສາມາດເຂົ້າເຖິງ ອາຄານ, ສະຖານທີ່ສາທາລະນະ ໄດ້ຢ່າງສະດວກ, ປອດໄພ ແລະ ໄດ້ຮັບການຫຼຸດຜ່ອນ ຄ່າບໍລິການ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການກ່ຽວຂ້ອງ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເປັນເຈົ້າຂອງອາຄານ, ສະຖານທີ່ນັ້ນ ຕ້ອງ ສ້າງ, ຕິດຕັ້ງ ຫຼື ປັບປຸງ ສິ່ງອຳນວຍຄວາມສະດວກສຳລັບຜູ້ອາຍຸສູງ ເປັນຕົ້ນ ທາງຍ່າງ, ທາງເນີນ, ຮາວຂັ້ນໄດ, ລິບ, ຫ້ອງນ້ຳ, ສະຖານທີ່ຈອດລົດ, ສັນຍາລັກ ແລະ ເຄື່ອງໝາຍຊີ້ບອກອື່ນ.

**ມາດຕາ 26 ການເຂົ້າເຖິງການຂົນສົ່ງສາທາລະນະ**

ຜູ້ອາຍຸສູງ ສາມາດເຂົ້າເຖິງການຂົນສົ່ງສາທາລະນະ ໃນການເດີນທາງ ໄດ້ຢ່າງສະດວກ, ປອດໄພ ແລະ ໄດ້ຮັບການຫຼຸດຜ່ອນ ຄ່າບໍລິການ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການກ່ຽວຂ້ອງ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເປັນເຈົ້າຂອງການຂົນສົ່ງສາທາລະນະ ຕ້ອງ ສ້າງ, ຕິດຕັ້ງ ຫຼື ປັບປຸງ ສິ່ງອຳນວຍຄວາມສະດວກ ສຳລັບຜູ້ອາຍຸສູງ ເປັນຕົ້ນ ການຂຶ້ນ ຫຼື ລົງຍານພາຫະນະ, ການຈັດສັນບ່ອນນັ່ງສະເພາະ, ການບໍລິການໃນລະບົບຂົນສົ່ງສາທາລະນະ.

## ໝວດທີ 8
## ສະຖິຕິ ຜູ້ອາຍຸສູງ

**ມາດຕາ 27 ສະຖິຕິ**

ສະຖິຕິຜູ້ອາຍຸສູງ ແມ່ນ ຂໍ້ມູນ ແລະ ຕົວເລກ ທີ່ສ່ອງແສງເຖິງສະພາບຄວາມເປັນຈິງ ກ່ຽວກັບຜູ້ອາຍຸສູງ ໃນແຕ່ລະໄລຍະ ເປັນຕົ້ນ ຈຳນວນ, ເພດ, ອາຍຸ, ທີ່ຢູ່ອາໄສ, ຊົນເຜົ່າ, ສະຖານະພາບການເຄື່ອນຍ້າຍ, ຄວາມພິການ, ຊີວິດການເປັນຢູ່ ຂອງຜູ້ອາຍຸສູງ ເພື່ອໃຊ້ເປັນບ່ອນອີງໃນການຄຸ້ມຄອງ ແລະ ພັດທະນາວຽກງານ ຜູ້ອາຍຸສູງ.

**ມາດຕາ 28 ການເກັບກຳສະຖິຕິ**

ການເກັບກຳສະຖິຕິຜູ້ອາຍຸສູງ ແມ່ນ ການບັນທຶກຂໍ້ມູນກ່ຽວກັບຜູ້ອາຍຸສູງ ໂດຍຜ່ານຂະບວນການ ສຳພາດ, ເກັບກຳ, ສັງລວມ, ປຸງແຕ່ງ, ວິໄຈ ແລະ ວິເຄາະ ຕາມຫຼັກວິທະຍາສາດທາງດ້ານສະຖິຕິ ທີ່ໄດ້ກຳນົດໄວ້ ໃນກົດໝາຍວ່າດ້ວຍ ສະຖິຕິ.

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງເກັບກຳສະຖິຕິ ແລະ ສ້າງຖານຂໍ້ມູນສຳລັບຜູ້ອາຍຸສູງ.

## ພາກທີ IV
## ສະມາຄົມຜູ້ອາຍຸສູງ

**ມາດຕາ 29 ສະມາຄົມຜູ້ອາຍຸສູງ**

ສະມາຄົມຜູ້ອາຍຸສູງ ແມ່ນ ອົງການຈັດຕັ້ງທາງສັງຄົມ ທີ່ສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ ແລະ ໄດ້ຮັບ ອະນຸຍາດສ້າງຕັ້ງຕາມລະບຽບການ, ມີພາລະບົດບາດເປັນຕົວແທນ ແລະ ເຕົ້າໂຮມຄວາມສາມັກຄີຜູ້ອາຍຸສູງ ເພື່ອ ຊຸກຍູ້, ສົ່ງເສີມ, ໃຫ້ການຊ່ວຍເຫຼືອ ແລະ ປົກປ້ອງສິດ, ຜົນປະໂຫຍດອັນຊອບທຳຂອງຜູ້ອາຍຸສູງ.

**ມາດຕາ 30 ສິດ ແລະ ໜ້າທີ່ ຂອງສະມາຄົມຜູ້ອາຍຸສູງ**

ສະມາຄົມຜູ້ອາຍຸສູງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງແຜນການເຄື່ອນໄຫວຂອງຕົນ ໃນແຕ່ລະໄລຍະ ໂດຍມີການປະສານສົມທົບກັບ ອົງການຄຸ້ມຄອງ ວຽກງານຜູ້ອາຍຸສູງ;
2. ເຕົ້າໂຮມຄວາມສາມັກຄີ, ສຶກສາອົບຮົມ ສະມາຊິກຂອງຕົນ ໃຫ້ປະຕິບັດແນວທາງຂອງພັກ, ລັດຖະທຳມະນູນ ແລະ ກົດໝາຍຂອງລັດ;
3. ຊຸກຍູ້, ສົ່ງເສີມ ວຽກງານຜູ້ອາຍຸສູງໃຫ້ມີການຂະຫຍາຍຕົວ, ມີຄວາມສະດວກ, ວ່ອງໄວ ແລະ ມີ ປະສິດທິຜົນ;
4. ຄົ້ນຄວ້າວິທີການ, ປະສານສົມທົບ, ຕິດຕາມ ແລະ ແກ້ໄຂບັນຫາ ທີ່ເປັນອຸປະສັກໃຫ້ແກ່ການເຄື່ອນ ໄຫວວຽກງານຜູ້ອາຍຸສູງ;
5. ປະເມີນຜົນ, ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຜູ້ອາຍຸສູງ ຕໍ່ອົງການຄຸ້ມຄອງວຽກງານ ຜູ້ອາຍຸສູງ ຢ່າງເປັນປົກກະຕິ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 31 ກອງທຶນສະມາຄົມຜູ້ອາຍຸສູງ

ລັດ ສົ່ງເສີມໃຫ້ສະມາຄົມຜູ້ອາຍຸສູງ ສ້າງກອງທຶນເພື່ອລະດົມ, ສະສົມທຶນ ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ.

## ພາກທີ V
## ຂໍ້ຫ້າມ

ມາດຕາ 32 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ຈຳກັດ, ກີດກັ້ນ ການສະແດງຄຳເຫັນ ຂອງຜູ້ອາຍຸສູງ;

2. ສະແຫວງຫາຜົນປະໂຫຍດຈາກຜູ້ອາຍຸສູງ;

3. ບໍ່ເຄົາລົບຊີວິດສ່ວນຕົວ, ຄອບຄົວ ຂອງຜູ້ອາຍຸສູງ;

4. ໂຄສະນາ ເຜີຍແຜ່ ຫຼື ສະໜອງຂໍ້ມູນ ໃນທາງບິດເບືອນ, ເສື່ອມເສຍ ກ່ຽວກັບຜູ້ອາຍຸສູງ ແລະ ວຽກງານຜູ້ອາຍຸສູງ;

5. ຈຳແນກ ຫຼື ໝິ່ນປະມາດ ແລະ ໃສ່ຮ້າຍປ້າຍສີ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຄື່ອນໄຫວວຽກງານຜູ້ອາຍຸສູງ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

ມາດຕາ 33 ຂໍ້ຫ້າມສຳລັບ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ

ຫ້າມ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ ມີ ພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ສິດ, ໜ້າທີ່ ແລະ ຕຳແໜ່ງ, ກົດໜ່ວງ, ຖ່ວງດຶງ, ຮຽກເອົາສິນບົນ ເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ໝູ່ເພື່ອນ ຊຶ່ງສ້າງຄວາມເສຍຫາຍແກ່ຜົນປະໂຫຍດ ຂອງຜູ້ອາຍຸສູງ;

2. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບ ຫຼື ຂາດຈັນຍາບັນ ທີ່ກໍ່ຄວາມເສຍຫາຍ ຕໍ່ຜູ້ອາຍຸສູງ;

3. ຮຽກ ຫຼື ທວງ ເອົາຄ່າທຳນຽມ, ຄ່າບໍລິການ ຫຼື ນຳໃຊ້ລາຍຮັບວິຊາການກ່ຽວກັບວຽກງານຜູ້ອາຍຸສູງ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

4. ເປີດເຜີຍ ຂໍ້ມູນສ່ວນບຸກຄົນຂອງຜູ້ອາຍຸສູງ ຫຼື ຄວາມລັບທາງລັດຖະການ, ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານຜູ້ອາຍຸສູງ ໂດຍບໍ່ໄດ້ຮັບອະນຸຍາດ;

5. ອອກເອກະສານກ່ຽວກັບຜູ້ອາຍຸສູງ ບໍ່ຖືກຕ້ອງ ຫຼື ປອມແປງເອກະສານດັ່ງກ່າວ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VI
## ຄະນະກຳມະການແຫ່ງຊາດ ເພື່ອຜູ້ອາຍຸສູງ

ມາດຕາ 34 ຄະນະກຳມະການແຫ່ງຊາດ ເພື່ອຜູ້ອາຍຸສູງ

ຄະນະກຳມະການແຫ່ງຊາດ ເພື່ອຜູ້ອາຍຸສູງ ແມ່ນ ການຈັດຕັ້ງທີ່ບໍ່ປະຈຳການ, ມີພາລະບົດບາດ ໃນການຊຸກຍູ້ ສົ່ງເສີມວຽກງານຜູ້ອາຍຸສູງ ໃຫ້ມີປະສິດທິຜົນ, ສະດວກ, ວ່ອງໄວ, ມີຄວາມກ້າວໜ້າຂະຫຍາຍຕົວ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

ຄະນະກຳມະການແຫ່ງຊາດ ເພື່ອຜູ້ອາຍຸສູງ ປະກອບດ້ວຍ:

1. ຄະນະກຳມະການ ເພື່ອຜູ້ອາຍຸສູງ ຂັ້ນສູນກາງ;
2. ຄະນະກຳມະການ ເພື່ອຜູ້ອາຍຸສູງ ຂັ້ນແຂວງ;
3. ຄະນະກຳມະການ ເພື່ອຜູ້ອາຍຸສູງ ຂັ້ນເມືອງ.

**ມາດຕາ 35 ຄະນະກຳມະການ ເພື່ອຜູ້ອາຍຸສູງ ຂັ້ນສູນກາງ**

ຄະນະກຳມະການ ເພື່ອຜູ້ອາຍຸສູງ ຂັ້ນສູນກາງ ຖືກແຕ່ງຕັ້ງໂດຍ ນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໂດຍມີກົມນະໂຍບາຍຕໍ່ຜູ້ມີຜົນງານ, ພິການ ແລະ ຜູ້ອາຍຸສູງ ເປັນກອງເລຂາ.

ຄະນະກຳມະການແຫ່ງຊາດ ເພື່ອຜູ້ອາຍຸສູງ ຂັ້ນສູນກາງ ປະກອບດ້ວຍ:

| | |
|---|---|
| 1. ລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | ເປັນປະທານ; |
| 2. ຮອງລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | ເປັນຮອງປະທານ;<br>ທັງເປັນຜູ້ປະຈຳການ; |
| 3. ຮອງລັດຖະມົນຕີ ກະຊວງສາທາລະນະສຸກ | ເປັນຮອງປະທານ; |
| 4. ຮອງລັດຖະມົນຕີ ກະຊວງການເງິນ | ເປັນຮອງປະທານ; |
| 5. ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ | ເປັນກຳມະການ; |
| 6. ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ | ເປັນກຳມະການ; |
| 7. ຮອງລັດຖະມົນຕີ ກະຊວງການຕ່າງປະເທດ | ເປັນກຳມະການ; |
| 8. ຮອງລັດຖະມົນຕີ ກະຊວງຍຸຕິທຳ | ເປັນກຳມະການ; |
| 9. ຮອງລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ | ເປັນກຳມະການ; |
| 10. ຮອງລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | ເປັນກຳມະການ; |
| 11. ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ | ເປັນກຳມະການ; |
| 12. ຜູ້ຕາງໜ້າ ສະມາຄົມຜູ້ອາຍຸສູງ | ເປັນກຳມະການ; |
| 13. ຫົວໜ້າກົມນະໂຍບາຍຕໍ່ຜູ້ມີຜົນງານ, ພິການ ແລະ ຜູ້ອາຍຸສູງ | ເປັນກຳມະການ<br>ທັງເປັນຫົວໜ້າກອງເລຂາ. |

**ມາດຕາ 36 ຄະນະກຳມະການ ເພື່ອຜູ້ອາຍຸສູງ ຂັ້ນແຂວງ**

ຄະນະກຳມະການ ເພື່ອຜູ້ອາຍຸສູງ ຂັ້ນແຂວງ ມອບໃຫ້ ເຈົ້າຄອງນະຄອນຫຼວງ, ເຈົ້າແຂວງ ເປັນຜູ້ແຕ່ງຕັ້ງ ຕາມການສະເໜີ ຂອງຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ ໂດຍມີຂະແໜງນະໂຍບາຍຕໍ່ຜູ້ມີຜົນງານ, ພິການ ແລະ ຜູ້ອາຍຸສູງ ຂອງພະແນກແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນແຂວງ ເປັນກອງເລຂາ.

ຄະນະກຳມະການ ເພື່ອຜູ້ອາຍຸສູງ ຂັ້ນແຂວງ ປະກອບດ້ວຍ:

| | |
|---|---|
| 1. ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ | ເປັນປະທານ; |
| 2. ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ | ເປັນຮອງປະທານ;<br>ທັງເປັນຜູ້ປະຈຳການ; |
| 3. ຮອງຫົວໜ້າພະແນກສາທາລະນະສຸກ | ເປັນຮອງປະທານ; |

4. ຮອງຫົວໜ້າພະແນກການເງິນ ເປັນຮອງປະທານ;
5. ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ ເປັນກຳມະການ;
6. ຮອງຫົວໜ້າພະແນກແຜນການ ແລະ ການລົງທຶນ ເປັນກຳມະການ;
7. ຮອງຫົວໜ້າພະແນກການຕ່າງປະເທດ ເປັນກຳມະການ;
8. ຮອງຫົວໜ້າພະແນກຍຸຕິທຳ ເປັນກຳມະການ;
9. ຮອງຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ເປັນກຳມະການ;
10. ຮອງຫົວໜ້າພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນກຳມະການ;
11. ຮອງຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ເປັນກຳມະການ;
12. ຜູ້ຕາງໜ້າ ສະມາຄົມຜູ້ອາຍຸສູງ ເປັນກຳມະການ;
13. ຫົວໜ້າຂະແໜງນະໂຍບາຍຕໍ່ຜູ້ມີຜົນງານ, ພິການ ແລະ ຜູ້ອາຍຸສູງ ເປັນກຳມະການ ທັງເປັນຫົວໜ້າກອງເລຂາ.

**ມາດຕາ 37 ຄະນະກຳມະການ ເພື່ອຜູ້ອາຍຸສູງ ຂັ້ນເມືອງ**

ຄະນະກຳມະການ ເພື່ອຜູ້ອາຍຸສູງ ຂັ້ນເມືອງ ມອບໃຫ້ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເປັນຜູ້ແຕ່ງຕັ້ງ ຕາມການສະເໜີ ຂອງຫົວໜ້າຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ໂດຍມີໜ່ວຍງານນະໂຍບາຍຕໍ່ຜູ້ມີຜົນງານ, ພິການ ແລະ ຜູ້ອາຍຸສູງ ຂອງຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນເມືອງ ເປັນກອງເລຂາ.

ຄະນະກຳມະການ ເພື່ອຜູ້ອາຍຸສູງ ຂັ້ນເມືອງ ປະກອບດ້ວຍ:

1. ຮອງເຈົ້າເມືອງ, ຮອງຫົວໜ້າເທດສະບານ, ຮອງເຈົ້ານະຄອນ ເປັນປະທານ;
2. ຫົວໜ້າຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເປັນ ຮອງປະທານ; ທັງເປັນຜູ້ປະຈຳການ;
3. ຮອງຫົວຫ້ອງການສາທາລະນະສຸກ ເປັນຮອງປະທານ;
4. ຮອງຫົວຫ້ອງການການເງິນ ເປັນຮອງປະທານ;
5. ຮອງຫົວຫ້ອງການສຶກສາທິການ ແລະ ກິລາ ເປັນກຳມະການ;
6. ຮອງຫົວຫ້ອງການແຜນການ ແລະ ການລົງທຶນ ເປັນກຳມະການ;
7. ຮອງຫົວຫ້ອງການຍຸຕິທຳ ເປັນກຳມະການ;
8. ຮອງຫົວຫ້ອງການໂຍທາທິການ ແລະ ຂົນສົ່ງ ເປັນກຳມະການ;
9. ຮອງຫົວຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນກຳມະການ;
10. ຮອງຫົວຫ້ອງການອຸດສາຫະກຳ ແລະ ການຄ້າ ເປັນກຳມະການ;
11. ຜູ້ຕາງໜ້າ ສະມາຄົມຜູ້ອາຍຸສູງ ເປັນກຳມະການ;
12. ຫົວໜ້າໜ່ວຍງານນະໂຍບາຍຕໍ່ຜູ້ມີຜົນງານ, ພິການ ແລະ ຜູ້ອາຍຸສູງ ເປັນກຳມະການ ທັງເປັນຫົວໜ້າກອງເລຂາ.

**ມາດຕາ 38 ກອງປະຊຸມ ຄະນະກຳມະການ ເພື່ອຜູ້ອາຍຸສູງ ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ**

ກອງປະຊຸມ ຄະນະກຳມະການ ເພື່ອຜູ້ອາຍຸສູງ ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ປະກອບດ້ວຍ ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ.

ກອງປະຊຸມສາມັນຈັດຂຶ້ນ ປີລະ ໜຶ່ງຄັ້ງ ໂດຍການເປັນປະທານ ຂອງປະທານຄະນະກຳມະການ ເພື່ອຜູ້ອາຍຸສູງ ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ເພື່ອພິຈາລະນາ ແລະ ຕົກລົງບັນຫາສຳຄັນຕ່າງໆ ກ່ຽວກັບ ການຊຸກຍູ້ ແລະ ສົ່ງເສີມ ວຽກງານຜູ້ອາຍຸສູງ.

ກອງປະຊຸມວິສາມັນ ຈັດຂຶ້ນເມື່ອໃດກໍໄດ້ ເພື່ອພິຈາລະນາບັນຫາຈຳເປັນ, ສຳຄັນ ແລະ ຮີບດ່ວນ ຕາມ ການຮຽກໂຮມ ແລະ ເປັນປະທານຂອງປະທານຄະນະກຳມະການ ເພື່ອຜູ້ອາຍຸສູງ ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ຫຼື ຕາມການສະເໜີຂອງຫົວໜ້າກອງເລຂາຄະນະກຳມະການ ເພື່ອຜູ້ອາຍຸສູງ ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ.

ກອງປະຊຸມຄະນະກຳມະການ ເພື່ອຜູ້ອາຍຸສູງ ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ຈະເປີດຂຶ້ນໄດ້ກໍຕໍ່ເມື່ອ ມີຄະນະກຳມະການເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນທັງໝົດ.

ມະຕິຂອງກອງປະຊຸມ ຈະມີຜົນສັກສິດ ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງ ຂອງຈຳນວນ ສະມາຊິກທີ່ເຂົ້າຮ່ວມ. ໃນກໍລະນີ ມີຄະແນນສຽງເທົ່າກັນນັ້ນ ຄະແນນສຽງຂອງປະທານ ເປັນສຽງຊີ້ຂາດ.

**ມາດຕາ 39 ສິດ ແລະ ໜ້າທີ່ ຂອງຄະນະກຳມະການ ເພື່ອຜູ້ອາຍຸສູງ ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ**

ຄະນະກຳມະການ ເພື່ອຜູ້ອາຍຸສູງ ຂັ້ນສູງກາງ, ຂັ້ນແຂວງ, ຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ຕາມຂອບ ເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ໂຄສະນາ ເຜີຍແຜ່ ແນວທາງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານຜູ້ອາຍຸສູງ ຕາມຄວາມຮັບຜິດຊອບຂອງຕົນ;

2. ຄົ້ນຄວ້າ ແລະ ນຳສະເໜີ ອົງການຄຸ້ມຄອງວຽກງານຜູ້ອາຍຸສູງ ກ່ຽວກັບການກຳນົດກົນໄກ ການຊຸກຍູ້ ສົ່ງເສີມ ວຽກງານຜູ້ອາຍຸສູງ ແຕ່ສູນກາງລົງຮອດທ້ອງຖິ່ນ;

3. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ເອກະຊົນ ໃນການຈັດຕັ້ງປະຕິບັດ ສົນທິສັນຍາ, ສັນຍາ, ອະນຸສັນຍາ, ຖະແຫຼງການ ແລະ ເອກະສານອື່ນ ຂອງພາກພື້ນ ແລະ ສາກົນ ກ່ຽວກັບຜູ້ ອາຍຸສູງ ທີ່ ສປປ ລາວ ເປັນພາຄີ;

4. ປຸກລະດົມ, ຂົນຂວາຍ ສັງຄົມ ປະກອບສ່ວນເຂົ້າໃນການ ພັດທະນາ, ປົກປ້ອງສິດ ແລະ ຜົນປະ ໂຫຍດ ອັນຊອບທຳ ຂອງຜູ້ອາຍຸສູງ ຕາມບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ;

5. ພົວພັນ ແລະ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບ ການຊຸກຍູ້ ສົ່ງເສີມວຽກ ງານຜູ້ອາຍຸສູງ ຕາມການມອບໝາຍ;

6. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນ ຕໍ່ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຫຼື ຕາມການມອບໝາຍ.

## ພາກທີ VII

## ການຄຸ້ມຄອງ ແລະ ກວດກາ ວຽກງານຜູ້ອາຍຸສູງ

**ມາດຕາ 40 ອົງການຄຸ້ມຄອງ ແລະ ກວດກາ ວຽກງານຜູ້ອາຍຸສູງ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ຮັບຜິດຊອບໂດຍກົງ ໃນການຄຸ້ມຄອງ ແລະ ກວດກາ ວຽກງານຜູ້ອາຍຸສູງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການລັດທຽບເທົ່າກະຊວງ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານຜູ້ອາຍຸສູງ ປະກອບດ້ວຍ:

1. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
2. ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫຼວງ;
3. ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 41 ສິດ ແລະ ໜ້າທີ່ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ຫຼື ປັບປຸງ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານຜູ້ອາຍຸສູງ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານຜູ້ອາຍຸສູງ ເປັນລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ແລ້ວຈັດຕັ້ງປະຕິບັດ;
3. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານຜູ້ອາຍຸສູງ;
4. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຜູ້ອາຍຸສູງ;
5. ຊີ້ນຳ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານຜູ້ອາຍຸສູງ ຕາມສາຍຕັ້ງ ຂອງຕົນ ໃນຂອບເຂດທົ່ວປະເທດ;
6. ພິຈາລະນາ ການສະເໜີ ສ້າງຕັ້ງ, ຍຸບເລີກ ແລະ ຄຸ້ມຄອງ ການຈັດຕັ້ງສັງຄົມ ຂອງຜູ້ອາຍຸສູງ;
7. ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ ບຸກຄະລາກອນ ກ່ຽວກັບວຽກງານຜູ້ອາຍຸສູງ;
8. ຮັບ ແລະ ພິຈາລະນາແກ້ໄຂ ຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານຜູ້ອາຍຸສູງ;
9. ພົວພັນ ແລະ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຜູ້ອາຍຸສູງ;
10. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຜູ້ອາຍຸສູງ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;
11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 42 ສິດ ແລະ ໜ້າທີ່ ຂອງພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫຼວງ**

ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຜູ້ອາຍຸສູງ;

2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຜູ້ອາຍຸສູງ;

3. ຊີ້ນຳ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນເມືອງ ໃນການຈັດຕັ້ງປະຕິບັດວຽກງານ ຜູ້ອາຍຸສູງ;

4. ບຳລຸງ ສ້າງ ແລະ ຍົກລະດັບ ບຸກຄະລາກອນ ກ່ຽວກັບວຽກງານຜູ້ອາຍຸສູງ;

5. ຕິດຕາມ ແລະ ຊຸກຍູ້ ການເຄື່ອນໄຫວວຽກງານການຈັດຕັ້ງສັງຄົມ ຂອງຜູ້ອາຍຸສູງ;

6. ຮັບ ແລະ ພິຈາລະນາແກ້ໄຂ ຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານ ຜູ້ອາຍຸສູງ;

7. ປະສານສົມທົບກັບພະແນກການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ຕິດຕາມ ແລະ ສົ່ງເສີມວຽກງານຜູ້ອາຍຸສູງ;

8. ພົວພັນ ແລະ ຮ່ວມມືກັບ ຕ່າງປະເທດ ກ່ຽວກັບວຽກງານຜູ້ອາຍຸສູງ ຕາມການມອບໝາຍ;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຜູ້ອາຍຸສູງ ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ອົງການປົກຄອງ ຂັ້ນແຂວງ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 43 ສິດ ແລະ ໜ້າທີ່ ຂອງຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ເມືອງ, ເທດສະບານ, ນະຄອນ**

ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງ ປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຜູ້ອາຍຸສູງ;

2. ຊີ້ນຳ ແລະ ຕິດຕາມ ການຈັດຕັ້ງປະຕິບັດວຽກງານຜູ້ອາຍຸສູງ;

3. ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຜູ້ອາຍຸສູງ;

4. ຕິດຕາມ ແລະ ຊຸກຍູ້ ການເຄື່ອນໄຫວວຽກງານການຈັດຕັ້ງສັງຄົມຂອງຜູ້ອາຍຸສູງ;

5. ຮັບ ແລະ ພິຈາລະນາແກ້ໄຂ ຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານ ຜູ້ອາຍຸສູງ;

6. ສະເໜີ ບຳລຸງ ສ້າງ ແລະ ຍົກລະດັບ ບຸກຄະລາກອນ ກ່ຽວກັບວຽກງານຜູ້ອາຍຸສູງ;

7. ປະສານສົມທົບກັບຫ້ອງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ຕິດຕາມ ແລະ ສົ່ງເສີມວຽກງານຜູ້ອາຍຸສູງ;

8. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຜູ້ອາຍຸສູງ ໃຫ້ພະແນກແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນແຂວງ ແລະ ອົງການປົກຄອງ ຂັ້ນເມືອງ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 44 ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ**

ຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ມີຄວາມຮັບຜິດຊອບ ຕາມພາລະບົດບາດ ຂອງຕົນ ໃນການຮ່ວມມື, ຄຸ້ມຄອງ, ຕິດຕາມ, ກວດກາ, ຈັດຕັ້ງປະຕິບັດ, ປະສານສົມທົບ, ອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດ ວຽກງານຜູ້ອາຍຸສູງ ຕາມທີ່ໄດ້ກຳນົດໄວ້ ໃນດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ມາດຕາ 45 ເນື້ອໃນການກວດກາ

ການກວດກາວຽກງານຜູ້ອາຍຸສູງ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຜູ້ອາຍຸສູງ;

2. ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ ກ່ຽວກັບວຽກງານຜູ້ອາຍຸສູງ;

3. ການສ້າງ ແລະ ປະຕິບັດແຜນການກ່ຽວກັບວຽກງານຜູ້ອາຍຸສູງ.

ມາດຕາ 46 ຮູບການການກວດກາ

ການກວດກາວຽກງານຜູ້ອາຍຸສູງ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການ ທີ່ມີລັກສະນະກວດກາເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍມີການແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນ ຢ່າງໜ້ອຍ ຊາວສີ່ ຊົ່ວໂມງ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາ ເມື່ອເຫັນວ່າມີຄວາມຈຳເປັນ, ຮີບດ່ວນໂດຍບໍ່ແຈ້ງລ່ວງໜ້າໃຫ້ຜູ້ຖືກກວດກາຮູ້.

ການກວດກາ ວຽກງານຜູ້ອາຍຸສູງ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 47 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 48 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ດຳເນີນຄະດີທາງອາຍາ ຕາມກົດໝາຍ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 49 ວັນຜູ້ອາຍຸສູງແຫ່ງຊາດ**

ລັດ ຖືເອົາ ວັນທີ 1 ຕຸລາ ວັນອາຍຸສູງສາກົນ ເປັນວັນຜູ້ອາຍຸສູງແຫ່ງຊາດ.

**ມາດຕາ 50 ການຈັດຕັ້ງປະຕິບັດ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 51 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດ ທາງລັດຖະການສິບຫ້າວັນ.

ຕາງໜ້າ ລັດຖະບານແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ພັນຄຳ ວິພາວັນ